ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 5902/ກປ

ນະຄອນຫຼວງວຽງຈັນ, ວັນທີ 26 NOV 2024

# ໜັງສືແຈ້ງຕອບ

**ຮຽນ:** ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

**ເລື່ອງ:** ສະເໜີຫົວຂໍ້ເອກະສານ ທີ່ຈະນຳສະເໜີເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ປະຈຳປີ 2025 ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2088/ຫສນຍ, ລົງວັນທີ 08 ຕຸລາ 2024;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 4738/ຫກ, ລົງວັນທີ 15 ພະຈິກ 2024.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດຮຽນສະເໜີຫົວຂໍ້ເອກະສານ ທີ່ຈະນຳສະເໜີເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານ ປະຈຳປີ 2025 ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງກະຊວງກະສິກຳ ແລະ ປ່າໄມ້ ຈຳນວນ 10 ຫົວຂໍ້, ໃນນີ້ເປັນຫົວຂໍ້ທີ່ຕົກຄ້າງມາແຕ່ ປີ 2024 ຈຳນວນ 06 ຫົວຂໍ້ ແລະ ສະເໜີໃໝ່ ຈຳນວນ 04 ຫົວຂໍ້ ຊຶ່ງປະກອບມີ ຮ່າງກົດໝາຍ 02 ສະບັບ (ປັບປຸງ 02 ສະບັບ), ຮ່າງດຳລັດ 06 ສະບັບ (ສ້າງໃໝ່ 05 ສະບັບ ແລະ ປັບປຸງ 01 ສະບັບ), ຮ່າງຍຸດທະສາດ 02 ສະບັບ (ສ້າງໃໝ່ 02 ສະບັບ) ດັ່ງລາຍລະອຽດ ລຸ່ມນີ້:

| ລ/ດ | ຫົວຂໍ້ເອກະສານ | ຄາດຄະເນເດືອນ | ກົມຮັບຜິດຊອບ | ໝາຍເຫດ |
|---|---|---|---|---|
| 1 | ຮ່າງ ດຳລັດ ວ່າດ້ວຍກະສິກຳສະອາດ (ສ້າງໃໝ່) | ມັງກອນ | ກົມປູກຝັງ | |
| 2 | ຮ່າງ ກົດໝາຍ ວ່າດ້ວຍກະສິກຳ (ປັບປຸງ) | ກຸມພາ | ກົມປູກຝັງ | ຕົກຄ້າງ ປີ 2024 |
| 3 | ຮ່າງ ກົດໝາຍ ວ່າດ້ວຍຊົນລະປະທານ (ປັບປຸງ) | ກຸມພາ | ກົມຊົນລະປະທານ | ຕົກຄ້າງ ປີ 2024 |
| 4 | ຮ່າງ ດຳລັດ ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ (ປັບປຸງ) | ມີນາ | ກົມພັດທະນາຊົນນະບົດ | ຕົກຄ້າງ ປີ 2024 |
| 5 | ຮ່າງ ດຳລັດ ວ່າດ້ວຍຢາງພາລາ (ສ້າງໃໝ່) | ເມສາ | ກົມປ່າໄມ້ | |
| 6 | ຮ່າງ ຍຸດທະສາດ ຈັດສັນພູມລຳເນົາ ແລະ ອາຊີບ (ສ້າງໃໝ່) | ເມສາ | ກົມພັດທະນາຊົນນະບົດ | ຕົກຄ້າງ ປີ 2024 |
| 7 | ຮ່າງ ຍຸດທະສາດ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ (ສ້າງໃໝ່) | ພຶດສະພາ | ກົມພັດທະນາຊົນນະບົດ | ຕົກຄ້າງ ປີ 2024 |

| | | | | |
|---|---|---|---|---|
| 8 | ຮ່າງດຳລັດວ່າດ້ວຍການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບສັດປ່າ (ສ້າງໃໝ່) | ກໍລະກົດ | ກົມກວດກາປ່າໄມ້ | |
| 9 | ຮ່າງ ດຳລັດ ວ່າດ້ວຍການຄຸ້ມຄອງຝຸ່ນ (ສ້າງໃໝ່) | ສິງຫາ | ກົມປູກຝັງ | ຕົກຄ້າງ ປີ 2024 |
| 10 | ຮ່າງ ດຳລັດ ວ່າດ້ວຍຄັງແຮແນວພັນເຂົ້າ (ສ້າງໃໝ່) | ພະຈິກ | ກົມສົ່ງເສີມກະສິກຳ ແລະ ສະຫະກອນ | |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

**ລັດຖະມົນຕີ**

**ບ່ອນນຳສົ່ງ:**

1.ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ (ໃຊ້ຕາງລາຍງານ);
2.ຫ້ອງການ 01 ສະບັບ (ເພື່ອຕິດຕາມ);
3.ບັນດາກົມກ່ຽວຂ້ອງ ພາກສ່ວນລະ 01 ສະບັບ (ເພື່ອກະກຽມ);
4.ພະແນກນິຕິກຳ, ຫກ 01 ສະບັບ (ເພື່ອຊຸກຍູ້);
5.ເກັບຮັກສາໄວ້ 01 ສະບັບ.

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

ປອ. ລິນຄຳ ດວງສະຫວັນ